**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

# "ຜ-ຟຟລ ຮັບລາງວັນ The Asset Triple A Country Awards 2018"

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ຮັບລາງວັນ The Asset Triple A Country Awards ປະຈໍາປີ 2018, ໃນສາຂາ **Best Corporate Bond for EDL-Generation's Bt13.66 billion baht bond** ຫຼື ການລະດົມທຶນດີເດັ່ນດ້ວຍການອອກຈໍາໜ່າຍຮຸ້ນກູ້ສະກຸນເງິນບາດມູນຄ່າ 13,66 ຕື້ບາດ, ເຊິ່ງມີພິທີມອບຮັບ ຈັດຂຶ້ນໃນວັນທີ 24/01/2019 ທີ່ຮົງກົງ ຈັດໂດຍ The Asset ເຊິ່ງເປັນວາລະສານດ້ານຕະຫຼາດທຶນທີ່ນໍາໜ້າ ແລະ ມີຊື່ສຽງໃນອາຊີ. ທາງ The Asset ໄດ້ກ່າວວ່າ "ຮຸ້ນກູ້ທີ່ອອກຈໍາໜ່າຍໃນຄັ້ງນີ້ ແມ່ນຈໍານວນທີ່ຫຼາຍທີ່ສຸດ ແລະ ອາຍຸຮຸ້ນກູ້ທີ່ຍາວທີ່ສຸດ ທີ່ອອກໂດຍລັດວິສາຫະກິດຕ່າງຊາດ, ເຊິ່ງແມ່ນປະເທດລາວ, ໃນຕະຫຼາດຮຸ້ນກູ້ຂອງ ປະເທດໄທ ເພື່ອນໍາໃຊ້ເງິນທຶນທີ່ລະດົມໄດ້ພາຍໃນປະເທດລາວ" ຍ້ອນສາເຫດນີ້ ຈຶ່ງເຮັດໃຫ້ ຜ-ຟຟລ ເຊິ່ງເປັນຜູ້ ອອກຮຸ້ນກູ້ໄດ້ຮັບລາງວັນທີ່ສໍາຄັນໃນຄັ້ງນີ້. ໃນການຮັບລາງວັນຄັ້ງນີ້ນໍາໂດຍ ທ່ານ ນາງ ລັດຕະນາ ປະທຸມວັນ, ຜູ້ອໍານວຍການໃຫຍ່ ຜ-ຟຟລ, ພ້ອມກັບ ການນໍາຂອງກະຊວງພະລັງງານ ແລະ ບໍ່ແຮ່ ແລະ ຄະນະ ຜ-ຟຟລ.

